ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0590 /ກງ

ນະຄອນຫຼວງວຽງຈັນ, ວັນທີ 25 ກຸມພາ 2022

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ

ເລື່ອງ: ຂຶ້ນທະບຽນ ແລະ ຂໍອະນຸຍາດ ນຳໃຊ້ເຄື່ອງບັນທຶກການ ຂາຍສິນຄ້າ ແລະ ບໍລິການ

- ອີງຕາມ ກົດໝາຍວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍໃບເກັບເງິນ ສະບັບເລກທີ 12/ນຍ, ລົງວັນທີ 23 ມັງກອນ 2006;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ຄຳແນະນຳກ່ຽວກັບຄຸ້ມຄອງ ແລະ ນຳໃຊ້ໃບເກັບເງິນສະເພາະທີ່ອອກດ້ວຍເຄື່ອງບັນທຶກການຂາຍສິນຄ້າ ແລະ ການບໍລິການ ສະບັບເລກທີ 1178/ກງ, ລົງວັນທີ 20 ເມສາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1179/ກງ, ລົງວັນທີ 20 ເມສາ 2017.

ເພື່ອຜັນຂະຫຍາຍ ຄຳແນະນຳກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ໃບເກັບເງິນສະເພາະທີ່ພິມອອກດ້ວຍເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1178/ກງ, ລົງວັນທີ 20 ເມສາ 2017 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1179/ກງ, ລົງວັນທີ 20 ເມສາ 2017 ເພື່ອໃສ່ຊຸກຍູ້, ສົ່ງເສີມ ການນຳໃຊ້ໃບເກັບເງິນເອເລັກໂຕຣນິກໃຫ້ນັບມື້ນັບຫຼາຍຂຶ້ນ, ຮັບປະກັນການນຳໃຊ້ໃບເກັບເງິນຖືກຕ້ອງ ສອດຄ່ອງ ຕາມລະບຽບ ແລະ ກົດໝາຍກຳນົດ.

## ລັດຖະມົນຕີກະຊວງການເງິນ ອອກແຈ້ງການ ດັ່ງນີ້:

**1.** ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ນຳໃຊ້ ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ຕ້ອງປະຕິບັດດັ່ງນີ້;

1) ຂໍຢັ້ງຢືນ ແລະ ຮັບຮອງເອົາ ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ກັບຫ້ອງການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ ເປັນຕົ້ນແມ່ນ: ເຄື່ອງບັນທຶກເງິນສົດ(Cash Register Machine), ເຄື່ອງບັນທຶກຢູ່ຈຸດຂາຍ (Point Of Sale), ເຄື່ອງບັນທຶກການຂາຍສິນຄ້າ ແລະການບໍລິການ ລະບົບບັນຊີຄອມພິວເຕີ (CAS), ເຄື່ອງບັນທຶກເງິນສົດ ຫຼື ເຄື່ອງບັນທຶກຢູ່ຈຸດຂາຍທີ່ຕັ້ງດ່ຽວ (Stand-Alone CRM/POS Machine), ໂປຣແກຣມ ຫຼື ເຄື່ອງບັນທຶກການຂາຍສິນຄ້າ ແລະການບໍລິການ ອື່ນໆ ທີ່ປ້ອນຂໍ້ມູນ ໃນລະບົບໂປຣແກຣມ ທີ່ຕິດຕັ້ງຢູ່ກັບເຄື່ອງ ແລະເກັບຮັກສາໄວ້ໃນເຄື່ອງດັ່ງກ່າວ ຫຼືໜ່ວຍ ຖານຂໍ້ມູນແມ່ (Server) ຫຼື ລະບົບເຊີເວີເມກ (Cloud Server) ໂດຍການປ້ອນຂໍ້ມູນຜ່ານຄີບອດ, ໜ້າຈໍສຳພັດ, ໂທລະສັບໜ້າຈໍສຳພັດ, ແທັບເລັດ, ເຄື່ອງສະແກນບາໂຄດ ຫຼື ອຸປະກອນ ອື່ນໆທີ່ພົວພັນກັບ ການບັນທຶກການ ຂາຍສິນຄ້າ ແລະ ບໍລິການ;

2) ຂໍອະນຸຍາດໃນການຮັບຮອງໃບເກັບເງິນ ທີ່ພິມຜ່ານເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ຕາມປະເພດ ດັ່ງຕໍ່ໄປນີ້:



สแกนด้วย CamScanner

- ໃບເກັບເງິນເປັນຊຸດ ທີ່ພິມອອກເປັນແຕ່ລະຊຸດຕໍ່ເນື່ອງກັນ ຈາກເຄື່ອງພິມ ຫຼື ເຄື່ອງບັນທຶກການຂາຍສິນຄ້າ ແລະ ການບໍລິການ ຊຶ່ງຊຸດໜຶ່ງ ຢ່າງໜ້ອຍ ມີ ສອງໃບ;
- ໃບເກັບເງິນເປັນໃບ ທີ່ພິມອອກເປັນແຕ່ລະໃບ ຈາກເຄື່ອງພິມ ຫຼື ເຄື່ອງບັນ ທຶກການຂາຍສິນຄ້າ ແລະ ການບໍລິການ;
- ໃບເກັບເງິນເອເລັກໂຕຣນິກ ແມ່ນ ຂໍ້ມູນ ການຊື້ ຂາຍສິນຄ້າ ແລະ/ຫຼື ການບໍລິການ, ທີ່ຖືກບັນທຶກຢູ່ໃນລະບົບເອເລັກໂຕຣນິກ ຊຶ່ງສາມາດສະແດງ ແລະ ພິມອອກໄດ້ ເພື່ອຢັ້ງຢືນ ແລະ ມີການຊໍາລະສະສາງຜ່ານລະບົບທະນາຄານ ຫຼື ເງິນສົດ.

**2.** ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ພັດທະນາ ຫຼື ສະໜອງໂປຣກຣາມ ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ຕ້ອງປະຕິບັດດັ່ງນີ້:

1) ຂໍຢັ້ງຢືນ ແລະ ອະນຸຍາດ ຮັບຮອງມາດຕະຖານໂປຣກຣາມ ທີ່ພັດທະນາ ນໍາກົມສ່ວຍສາອາກອນ;
2) ກ່ອນຈໍາໜ່າຍ ຫຼື ຕິດຕັ້ງໂປຣກຣາມ ໃຫ້ຜູ້ຮັບການສະໜອງ ຫຼື ຜູ້ນໍາໃຊ້ຕ້ອງໄດ້ຂໍອະນຸຍາດຈາກຂະແໜງສ່ວຍສາອາກອນກ່ອນ.

**3.** ເງື່ອນໄຂຂອງຫົວໜ່ວຍທຸລະກິດທີ່ຈະຂໍຢັ້ງຢືນ ແລະ ຮັບຮອງເອົາໃບເກັບເງິນ ທີ່ພິມອອກຈາກເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ມີດັ່ງນີ້:

1) ຫົວໜ່ວຍທຸລະກິດຕ້ອງມີ ໃບທະບຽນວິສາຫະກິດ ແລະ ເລກປະຈໍາຕົວຜູ້ເສຍອາກອນ, ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ;
2) ການພັດທະນາ ແລະ ປັບປຸງແກ້ໄຂໂປຣກຣາມຕ້ອງປະຕິບັດຕາມຮູບແບບຂອງໃບເກັບເງິນ ທີ່ກໍານົດໄວ້ໃນ ຂໍ້ 2, 3 ,4 ຂອງຄໍາແນະນໍາ ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ໃບເກັບເງິນສະເພາະທີ່ພິມອອກດ້ວຍເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1178/ກງ.

**4.** ເອກະສານປະກອບໃນການຂໍອະນຸຍາດ ສໍາລັບຜູ້ພັດທະນາ, ສະໜອງ ແລະ ນໍາໃຊ້ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ມີດັ່ງນີ້:

1) ໃບຄໍາຮ້ອງ ສາມາດດາວໂຫຼດໄດ້ຢູ່ ເວັບໄຊສ: taxservice.mof.gov.la ຫຼື ຢູ່ທີ່ຫ້ອງການສ່ວຍສາອາກອນບ່ອນທີ່ຂຶ້ນທະບຽນ;
2) ຄູ່ມືການນໍາໃຊ້ເຄື່ອງ ແລະ ອຸປະກອນຕ່າງໆທີ່ຈະສະເໜີຮັບຮອງມາດຕະຖານ;
3) ໃບຢັ້ງຢືນໂປຣກຣາມບັນຊີ (ຖ້າເຄື່ອງບັນທຶກຢູ່ຈຸດຂາຍເຊື່ອມຕໍ່ກັບໂປຣກຣາມບັນຊີ);
4) ໃບລາຍງານຫຍໍ້ກ່ຽວກັບຄຸນລັກສະນະຂອງເຄື່ອງ ແລະ ອຸປະກອນ;
5) ແບບຕົວຢ່າງ ຮູບແບບໃບເກັບເງິນ ຕາມແບບທີ່ກະຊວງການເງິນກໍານົດ, ບົດສະຫຼຸບປະຈໍາວັນ ແລະ ເອກະສານລາຍງານລາຍຮັບປະຈໍາເດືອນ.

**5.** ສິດ ແລະ ໜ້າທີ່ ຂອງຂະແໜງສ່ວຍສາອາກອນແຕ່ລະຂັ້ນ ມີດັ່ງນີ້:

1) ກົມສ່ວຍສາອາກອນ ພິຈາລະນາອອກໃບອະນຸຍາດໃຫ້ຫົວໜ່ວຍທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;
2) ສ່ວຍສາອາກອນປະຈໍາແຂວງ, ນະຄອນຫຼວງ ພິຈາລະນາອອກໃບອະນຸຍາດໃຫ້ແກ່ຫົວໜ່ວຍທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງແຂວງ, ນະຄອນຫຼວງ ແລະ ບັນດາເມືອງທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;
3) ການເຊື່ອມຕໍ່ເຂົ້າກັບລະບົບ ຄຸ້ມຄອງຂໍ້ມູນຂ່າວສານສ່ວຍສາອາກອນ TaxRIS ດ້ວຍລະບົບເອເລັກໂຕຣນິກແມ່ນກົມສ່ວຍສາອາກອນເປັນຜູ້ຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ;



สแกนด้วย CamScanner

4) ໃຫ້ສ່ວຍສາອາກອນແຕ່ລະຂັ້ນ ອໍານວຍຄວາມສະດວກໃນການຢັ້ງຢືນ ແລະ ອອກອະນຸຍາດຮັບຮອງເອົາໃບເກັບເງິນອີເລັກໂຕຣນິກທີ່ພິມອອກຈາກເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

5) ໃຫ້ສ່ວຍສາອາກອນແຕ່ລະຂັ້ນເຜີຍແຜ່ແນະນໍານິຕິກໍາທີ່ກ່ຽວຂ້ອງກັບໃບເກັບເງິນ ຢ່າງກວ້າງຂວາງ;

6) ໃຫ້ສ່ວຍສາອາກອນປະຈໍາ ແຂວງ, ນະຄອນຫຼວງ ແລະ ເມືອງປະສານສົມທົບກັບກົມສ່ວຍສາອາກອນໃນການເຊື່ອມຕໍ່ ຂໍ້ມູນການຂາຍສິນຄ້າ ແລະ ບໍລິການ Application Program Interface (API) ຂອງຫົວໜ່ວຍທີ່ຂຶ້ນກັບການຄຸ້ມຄອງຂອງຕົນກັບລະບົບລະບົບຂໍ້ມູນຂ່າວສານສ່ວຍສາອາກອນ TaxRIS ພາກສ່ວນທີ່ກ່ຽວຂ້ອງ;

7) ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການນໍາໃຊ້ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການຂອງຫົວໜ່ວຍທຸລະກິດທີ່ຂຶ້ນກັບການຄຸ້ມຄອງຂອງຕົນ.

**6. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

1) ຮັບພິຈາລະນາ ຄົ້ນຄວ້າຕໍ່ໃບອະນຸຍາດ ແລະ ອໍານວຍຄວາມສະດວກດ້ານຕ່າງໆໃນການດໍາເນີນທຸລະກິດ ແລະ ຮັບການຍ້ອງຍໍ, ອໍານວຍຄວາມສະດວກ ຫຼື ນະໂຍບາຍອື່ນ ຕາມມາດຕາ 92 ຂອງກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019 ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ;

2) ມີນະໂຍບາຍບໍ່ໃຫ້ຍື່ນປົດລາຍງານການນໍາໃຊ້ໃບເກັບເງິນປະຈໍາເດືອນ;

3) ອະນຸຍາດໃຫ້ລົງເປັນລາຍຈ່າຍດ້ານສ່ວຍສາອາກອນ ສໍາລັບຄ່າໃຊ້ຈ່າຍໃນການຕິດຕັ້ງ, ບໍາລຸງຮັກສາ ແລະ ສ້ອມແປງເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ.

**7. ມາດຕະການຕໍ່ຜູ້ລະເມີດ**

ສໍາລັບຜູ້ ພັດທະນາ ຫຼື ຜູ້ສະໜອງ ແລະ ຜູ້ນໍາໃຊ້ ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ລະເມີດບົດບັນຍັດທີ່ລະບຸໄວ້ໃນຄໍາແນະນໍາກ່ຽວກັບຄຸ້ມຄອງ ແລະ ນໍາໃຊ້ໃບເກັບເງິນສະເພາະທີ່ອອກດ້ວຍເຄື່ອງບັນທຶກການຂາຍສິນຄ້າ ແລະ ການບໍລິການ ສະບັບເລກທີ 1178/ກງ, ລົງວັນທີ 20 ເມສາ 2017 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນໍາໃຊ້ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ສະບັບເລກທີ 1179/ກງ, ລົງວັນທີ 20 ເມສາ 2017 ແມ່ນຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ດັ່ງນີ້:

1) ສໍາລັບ ເຈົ້າໜ້າທີ່ສ່ວຍສາອາກອນທີ່ກະທໍາການລະເມີດ ແມ່ນຈະຖືກປະຕິບັດຕາມກົດໝາຍວ່າດ້ວຍ ພະນັກງານ-ລັດຖະກອນ ແລະ ນິຕິກໍາທີ່ກ່ຽວຂ້ອງ ວາງອອກແຕ່ລະໄລຍະ;

2) ສໍາລັບ ຜູ້ພັດທະນາ ຫຼື ສະໜອງ ເຄື່ອງບັນທຶກການຂາຍສິນຄ້າ ແລະ ບໍລິການ ທີ່ບໍ່ມີໃບຢັ້ງຢືນຮັບຮອງມາດຕະຖານຈາກກົມສ່ວຍສາອາກອນ ຫາກຈໍາໜ່າຍ ຫຼື ຕິດຕັ້ງໂປຣແກຣມ:
   - ຈະຖືກປັບໃໝ 10.000.000 ກີບ/ເຄື່ອງ, ພ້ອມທັງເຮັດບົດບັນທຶກ ຫຼື ອອກແຈ້ງການໃຫ້ມາຂໍອະນຸຍາດ ອອກໃບຢັ້ງຢືນຕາມລະບຽບການ;
   - ສະເໜີໂຈະຊົ່ວຄາວ ຫລື ຍົກເລີກ ໃບອະນຸຍາດດໍາເນີນທຸລະກິດ ຕາມລະບຽບກົດໝາຍກໍານົດ;

3) ສໍາລັບ ຜູ້ນໍາໃຊ້ເຄື່ອງບັນທຶກການຂາຍສິນຄ້າ ແລະ ການບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ ຖ້າກວດເຫັນ:
   - ຄັ້ງທີໜຶ່ງ ຖືກສຶກສາອົບຮົມ ແລະ ເຮັດບົດບັນທຶກເພື່ອໃຫ້ມາຂໍອະນຸຍາດຕາມລະບຽບການ;
   - ຄັ້ງທີສອງ ຈະຖືກປັບໃໝ 10.000.000 ກີບ;
   - ສະເໜີໂຈະຊົ່ວຄາວ ຫລື ຍົກເລີກ ໃບອະນຸຍາດດໍາເນີນທຸລະກິດ ຕາມລະບຽບກົດໝາຍກໍານົດ.

4) ສໍາລັບຜູ້ທີ່ນິມໃຊ້ໃບເກັບເງິນທີ່ບໍ່ໄດ້ຮັບອະນຸຍາດຈາກຂະແໜງສ່ວຍສາອາກອນ
   - ບໍ່ຮັບຮູ້ເປັນໃບເກັບເງິນທີ່ຖືກຕ້ອງ ແລະ ບໍ່ອະນຸຍາດໃຫ້ ຫັກ, ຂໍຄືນ ແລະ ລົງລາຍຈ່າຍດ້ານສ່ວຍສາອາກອນ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ

ບຸນໂຈມ ອຸບົນປະເສີດ



สแกนด้วย CamScanner